**ບົດອອກຂ່າວ** :

ໃນມື້ວັນທີ 1 ຕຸລາ 2011, ສະຖານເອກອັກຄະລັດຖະທູດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ນະຄອນຫຼວງວໍຊິງຕັນ, ດີຊີ ແລະ ສະມາຄົມກິລາລາວ ລັດເວີຈີເນຍ ໄດ້ຮ່ວມກັນເປັນເຈົ້າພາບຈັດແຂ່ງຂັນກິລາຕີກ໊ອບ ເພື່ອຊີງຂັນລາງວັນປະຈຳປີ 2011 ຂອງທ່ານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳສະຫະລັດ ອາເມລິກາ ແລະ ການາດາ ໂດຍມີນັກກິລາຕີກ໊ອບເຊື້ອຊາດລາວເຂົ້າຮ່ວມຈຳນວນ 131 ທ່ານ ( ມີນັກກິລາເພດຍິງ 14 ທ່ານ ), ເຊິ່ງເດີນທາງມາຈາກ 9 ລັດ ໃນສະຫະລັດ ອາເມລິກາ ແລະ ຈຳນວນໜຶ່ງມາຈາກການາດາ ແລະ ຝຣັ່ງ .

ການຈັດງານແຂ່ງຂັນກິລາຕີກ໊ອບຄັ້ງນີ້ ແມ່ນເພື່ອສ້າງລາຍຮັບ ສົ່ງໄປປະກອບສ່ວນຊ່ວຍເຫຼືອປະຊາຊົນລາວຈຳນວນໜຶ່ງ ທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມຢູ່ປະເທດລາວ ແລະ ເພື່ອຊື້ປື້ມຮຽນພາສາລາວຂັ້ນປະຖົມ ແລະ ອຸປະກອນດົນຕີພື້ນເມືອງຂອງລາວຈຳນວນໜຶ່ງ ເພື່ອສົ່ງເສີມລູກຫຼານເຊື້ອຊາດລາວຢູ່ ສະຫະລັດ ອາເມລິກາ ທີ່ຢາກຮຽນພາສາລາວ ແລະ ມັກຮັກສິລະປະດົນຕີພື້ນເມືອງຂອງຊາດລາວເຮົາ.

ໃນຕອນຄ່ຳຂອງວັນດຽວກັນ, ສະຖານເອກອັກຄະລັດຖະທູດ ໄດ້ເປັນເຈົ້າພາບຈັດງານລ້ຽງສັງສັນ ແລະ ໄດ້ມອບຂັນລາງວັນໃຫ້ແກ່ພວກນັກກິລາທີ່ໄດ້ຮັບໄຊຊະນະຈາກການແຂ່ງຂັນໃນຄັ້ງນີ້ ດ້ວຍບັນຍາກາດເບີກບານມ່ວນຊື່ນ. ໃນໂອກາດດັ່ງກ່າວ, ທ່ານປະທານສະມາຄົມກິລາລາວ ລັດເວີຈີເນຍ ໄດ້ຕາງໜ້າໃຫ້ບັນດານັກກິລາເຊື້ອຊາດລາວທັງໝົດທີ່ມາຮ່ວມແຂ່ງຂັນ ມອບປັດໃຈຈຳນວນ 3,545 ໂດລາສະຫະລັດ ທີ່ໄດ້ຮັບຈາກການແຂ່ງຂັນກິລາຕີກ໊ອບຄັ້ງນີ້ ໃຫ້ແກ່ທ່ານເອກອັກຄະລັດຖະທູດລາວ ເພື່ອສົ່ງຕໍ່ໄປປະກອບສ່ວນຊ່ວຍເຫຼືອປະຊາຊົນລາວ ທີ່ປະສົບກັບໄພນ້ຳຖ້ວມ ທີ່ ສປປ ລາວ.

ທ່ານເອກອັກຄະລັດຖະທູດ ແສງ ສຸຂະທິວົງ ໄດ້ຕາງໜ້າໃຫ້ພະນັກງານສະຖານທູດ ແລະ ປະຊາຊົນລາວ ສະແດງຄວາມຊົມເຊີຍ ແລະ ຂອບອົກຂອບໃຈຕໍ່ນ້ຳໃຈອັນສູງສົ່ງຂອງບັນດານັກກິລາເຊື້ອຊາດລາວທັງໝົດ ທີ່ມີຄວາມເປັນຫ່ວງເປັນໃຍຕໍ່ຄວາມສຸກທຸກ ແລະ ຄິດຮອດຄິດເຖິງປະຊາຊົນລາວຢູ່ໃນປະເທດ; ແລະ ຈະສົ່ງປັດໃຈຈຳນວນດັ່ງກ່າວໄປປະກອບສ່ວນຊ່ວຍເຫຼືອປະຊາຊົນລາວ ທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມໃນໄວໆນີ້.

---------------------------